## ໝວດທີ I
## ຂໍ້ກໍານົດທົ່ວໄປ


ມາດຕາ 1 : ຈຸດປະສົງ ........... ... ... ... ... ... ... ... ... ... ... ... ... ... ... ... ... ... ... ... ... ... ... ... ...1-2
ມາດຕາ 2 : ຂອບເຂດການນໍາໃຊ້ ........... ... ... ... ... ... ... ... ... ... ... ... ... ... ... ... ... ... ... ... ... ... 2
ມາດຕາ 3 : ຄວາມໝາຍຂອງຄໍາສັບ........... ... ... ... ... ... ... ... ... ... ... ... ... ... ... ... ... ... ... ... ... 2-3


## ໝວດທີ II
## ການອະນຸຍາດປຸກສ້າງ


ມາດຕາ 4 : ຜູ້ອະນຸມັດການປຸກສ້າງ ແລະ ຢັ້ງຢືນຄວາມຖືກຕ້ອງຂອງການປຸກສ້າງ ... ... ... ... ... ... 3
ມາດຕາ 5 : ການປະກອບເອກະສານຂໍອະນຸຍາດປຸກສ້າງ .. ... ... . ... ... ... ... ... ... ... ... ... ... ... ... 3-4
ມາດຕາ 6 : ໃບອະນຸຍາດປຸກສ້າງ ..................... ... ... ... ... ... ... ... ... ... ... ... ... ... ... ... ... ... ... 4
ມາດຕາ 7 : ປະເພດຂອງການອະນຸຍາດປຸກສ້າງ ...... ... ... ... ... ... ... ... ... ... ... ... ... ... ... ... ... ...4
ມາດຕາ 8 : ການຈັດລະດັບຂອງການປຸກສ້າງ ..... ... ... ... ... ... ... ... ... ... ... ... ... ... ... ... ... ...4-5
ມາດຕາ 9 : ຂັ້ນຕອນການຄົ້ນຄ້ວາ ແລະ ການອະນຸຍາດປຸກສ້າງ .... ... ... ... ... ... ... ... ... ... ... ... 5
ມາດຕາ 10 : ການເກັບມ້ຽນ ແລະ ສໍາເນົາເອກະສານປຸກສ້າງ ... ... ... ... ... ... ... ... ... ... ... ... ..5-6


## ໝວດທີ III
## ການກວດກາ ແລະ ການຢັ້ງຢືນຄວາມຖືກຕ້ອງ ຂອງການປຸກສ້າງ


ມາດຕາ 11 : ການກວດກາການປຸກສ້າງ . ... ... ... ... ... ... ... ... ... ... ... ... ... ... ... ... ... ... ... . 6
ມາດຕາ 12 : ການອອກໃບຢັ້ງຢືນຄວາມຖືກຕ້ອງ . ... ... ... ... ... ... ... ... ... ... ... ... ... ... ... ... .. 6


## ໝວດທີ IV
## ອົງການຄຸ້ມຄອງ ແລະ ກວດກາການປຸກສ້າງ


ມາດຕາ 13 : ອົງການຄຸ້ມຄອງການປຸກສ້າງ .. ... ... ... ... ... ... ... ... ... ... ... ... ... ... ... ... ... .. 7
ມາດຕາ 14 : ສິດ ແລະ ຫນ້າທີ່ ຂອງກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ..... ... ... ...7
ມາດຕາ 15 : ສິດ ແລະ ຫນ້າທີ່ ຂອງພະແນກຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ...... ... ... .7-8

ມາດຕາ 16 : ສິດ ແລະ ຫນ້າທີ່ ຂອງຫ້ອງການຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງເມືອງ ແລະ ເທດສະບານ ......... ... ... ... ... ... ... ... ... ... ... ... ... ... ... ... ... ... ... ... 8
ມາດຕາ 17 : ສິດ ແລະ ຫນ້າທີ່ ຂອງອົງການປົກຄອງບ້ານ .. ... ... ... ... ... ... ... ... ... ... ... ... ... 8-9


## ໝວດທີ V

## ຫນ້າທີ່ ແລະ ຄວາມຮັບຜິດຊອບ ຂອງຜູ້ໄດ້ຮັບອະນຸຍາດການປຸກສ້າງ ແລະ ຂອງຜູ້ຮັບເໝົາກໍ່ສ້າງ


ມາດຕາ 18 : ຫນ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ໄດ້ຮັບອະນຸຍາດການປຸກສ້າງ ... ... ... ... ... ... 9

ມາດຕາ 19 : ຫນ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ຮັບເຫມົາກໍ່ສ້າງ ... . ... ... ... ... ... ... ... ... ... ...10


## ໝວດທີ VI

## ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ


ມາດຕາ 20 : ນະໂຍບາຍຕໍ່ຜູ້ມີຜົນງານ ... ... ... ... ... ... ... ... ... ... ... ... ... ... ... ... ... ... ... ... ..10

ມາດຕາ 21 : ມາດຕະການຕໍ່ຜູ້ລະເມີດ ... ... ... ... ... ... ... ... ... ... ... ... ... ... ... ... ... ... ... ..10-11


## ໝວດທີ VII

## ຂໍ້ກຳນົດສຸດທ້າຍ


ມາດຕາ 22 : ການຈັດຕັ້ງປະຕິບັດ . ... ... ... ... ... ... ... ... ... ... ... ... ... ... ... ... ... ... ... ... ... 12

ມາດຕາ 23 : ຜົນບັງຄັບໃຊ້ ........ ... ... ... ... ... ... ... ... ... ... ... ... ... ... ... ... ... ... ... ... ...12

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------000--------

ກະຊວງຄົມມະນາຄົມ ຂົນສົ່ງ

ໄປສະນີ ແລະ ກໍ່ສ້າງ ເລກທີ /ຄຂປກ

ນະຄອນຫລວງວຽງຈັນ, ວັນທີ

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າການ

## ກ່ຽວກັບການຄຸ້ມຄອງການປຸກສ້າງ

- ອີງຕາມກົດໝາຍວ່າດ້ວຍ ຜັງເມືອງ ສະບັບເລກທີ 03/19/ສພຊ ລົງວັນທີ 03/04/1999 ທີ່ປະທານປະເທດອອກລັດຖະດຳລັດ ປະກາດໃຊ້ ສະບັບເລກທີ 11 ສປປ ລົງວັນທີ 26 ເມສາ 1999;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 66/ນຍ ລົງວັນທີ 20/05/99, ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ.

**ລັດຖະມົນຕີວ່າການ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ອອກຂໍ້ຕົກລົງ :**

## ໝວດທີ I

## ຂໍ້ກຳນົດທົ່ວໄປ

**ມາດຕາ 1 : ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງລະບຽບການ ກ່ຽວກັບການຄຸ້ມຄອງປຸກສ້າງ ເພື່ອແນໃສ່ :

1. ຄຸ້ມຄອງການປຸກສ້າງ ໃນຂອບເຂດ ທົ່ວປະເທດ ໃຫ້ດຳເນີນໄປຢ່າງຖືກຕ້ອງ, ສອດຄ່ອງຕາມແຜນຜັງເມືອງ ແລະ ລະບຽບການທີ່ກ່ຽວຂ້ອງຮັບປະກັນໃຫ້ເທດສະບານຂອງແຂວງ, ນະຄອນ, ເຂດພິເສດ ແລະ ຕົວເມືອງຕ່າງໆ ມີຄວາມສີວິໄລ, ສວຍສົດງົດງາມ, ສະຫງົບ, ປອດໄພ, ເປັນລະບຽບຮຽບຮ້ອຍ ແລະ ມີສຸຂະອານາໄມ, ຮັກສາໄດ້ບູຮານສະຖານ, ສະຖາປັດຕະຍະກຳ, ສິ່ງແວດລ້ອມ ແລະ ທິວທັດຕົວເມືອງ ທີ່ມີຄຸນຄ່າ ທາງດ້ານປະຫວັດສາດ, ວັດທະນະທຳ - ສັງຄົມ ແລະ ທຳມະຊາດ;

2. ເປັນບ່ອນອີງໃຫ້ແກ່ ການຕິດຕາມກວດກາການປຸກສ້າງ, ການຢັ້ງຢືນຄວາມຖືກຕ້ອງ ຂອງການປຸກສ້າງ ແລະ ການປະກອບເອກະສານເພື່ອຂື້ນທະບຽນກຳມະສິດຕໍ່ສິ່ງປຸກສ້າງ, ການປະຕິບັດມາດຕະການຕໍ່ຜູ້ລະເມີດລະບຽບກົດໝາຍ;
3. ເຮັດໃຫ້ການອະນຸມັດການປຸກສ້າງ ປະຕິບັດໄດ້ຢ່າງຖືກຕ້ອງ ສະດວກ ແລະ ວ່ອງໄວ.

**ມາດຕາ 2 : ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ກັບທຸກກິດຈະການປຸກສ້າງ ທັງຂອງລັດ, ລວມໝູ່, ເອກະຊົນພາຍໃນ ແລະ ຕ່າງປະເທດໃນຂອບເຂດຕົວເມືອງ ແລະ ເຂດຊຸມຊົນຕ່າງໆ ຕາມການກຳນົດຂອງຜັງເມືອງ, ຍົກເວັ້ນ ກໍລະນີດັ່ງລຸ່ມນີ້ :

1. ກິດຈະການປຸກສ້າງ ຂອງໂຄງການລົງທຶນ ເຊິ່ງໄດ້ຮັບການອະນຸມັດຈາກລັດຖະບານແລ້ວ;
2. ກິດຈະການປຸກສ້າງ ທີ່ພົວພັນໂດຍກົງ ເຖິງຄວາມລັບສະເພາະວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ;
3. ກິດຈະການກໍ່ສ້າງຂອງໂຄງການພັດທະນາໂຄງລ່າງພື້ນຖານຕົວເມືອງ ຕາມແຜນຜັງເມືອງ ທີ່ຖືກຮັບຮອງແລ້ວ;
4. ກິດຈະການປຸກສ້າງໃນເຂດອຸດສະຫະກຳ,ເຂດເສດຖະກິດພິເສດ,ເຂດພັດທະນາຕົວເມືອງໃໝ່ ແລະ ຄຸ້ມບ້ານຈັດສັນ ທີ່ມີເອກະສານອອກແບບ, ເຕັກນິກ ແລະ ແຜນຜັງຈັດສັນລະອຽດຄົບຊຸດ ໂດຍໄດ້ ຜ່ານອົງການຄຸ້ມຄອງຜັງເມືອງ ແລະ ອົງການວິຊາການທີ່ກ່ຽວຂ້ອງຢ່າງຖືກຕ້ອງຕາມລະບຽບກົດໝາຍ;

**ມາດຕາ 3 : ຄວາມໝາຍຂອງຄຳສັບ**

ໃນຂໍ້ຕົກລົງສະບັບນີ້, ໄດ້ຈຳກັດຄວາມໝາຍຂອງຄຳສັບ ໄວ້ດັ່ງນີ້ :

1. ການປຸກສ້າງ ໝາຍເຖິງ ການດຳເນີນທຸກກິດຈະການກໍ່ສ້າງໃໝ່ ຫລື ການທັບມ້າງທັງໝົດຂອງອາຄານເພື່ອກໍ່ສ້າງຄືນໃໝ່;
2. ການສ້ອມແປງ ໝາຍເຖິງ ການດັດແປງ, ການປ່ຽນແປງ ຮູບຊົງພາຍນອກ, ການຕໍ່ເຕີມຕ່າງໆ, ການຮື້ຖອນ, ການເຄື່ອນຍ້າຍ ແລະ ການທັບມ້າງບາງສ່ວນຂອງອາຄານ;
3. ການປ່ຽນແປງການນຳໃຊ້ອາຄານ ໝາຍເຖິງ ການດັດແປງອາຄານທີ່ໄດ້ຮັບອະນຸຍາດແລ້ວເພື່ອນຳໃຊ້ໃນຈຸດປະສົງຢ່າງອື່ນ;
4. ການຂຸດດິນ ຫລື ຖົມດິນ ໝາຍເຖິງ ການປ່ຽນແປງຮູບຊົງສະພາບໜ້າດິນດ້ວຍການຂຸດ, ການຖົມ ຫລື ການຄູນຂື້ນເພື່ອການປຸກສ້າງ ຫລື ນຳໃຊ້ໃນຈຸດປະສົງອື່ນໆ;
5. ການຕິດຕັ້ງ ໝາຍເຖິງ ການປະກອບສິ້ນສ່ວນທີ່ສຳເລັດຮູບ ຕາມການອອກແບບ ເຊັ່ນ : ຕັ້ງເສົາໄຟຟ້າ, ເສົາໂທລະສັບ, ເສົາອາກາດ , ປ້າຍໂຄສະນາ ແລະ ອື່ນໆ;
6. ສິ່ງປຸກສ້າງຕ່າງໆ ຫມາຍເຖິງ :

- ອາຄານທີ່ນຳໃຊ້ເປັນທີ່ຢູ່ອາໃສ, ສະຖານທີ່ເຮັດວຽກງານ ຫລື ກິດຈະການດ້ານຕ່າງໆ ເຊັ່ນ : ດ້ານສາທາລະນະສຸກ, ການປ້ອງກັນຊາດ ປ້ອງກັນຄວາມສະງົບ, ການສຶກສາ, ວັດທະນະທຳ-

ສັງຄົມ, ສາດສະໜາ, ກິລາ, ທຸລະກິດການຄ້າ, ອຸດສາຫະກຳ ແລະ ກະສິກຳ ແລະ ອື່ນໆ;

- ກິດຈະການກໍ່ສ້າງທີ່ຕິດພັນກັບກິດຈະການຮັບໃຊ້ໃຫ້ແກ່ສາທາລະນະປະໂຫຍດ ເຊັ່ນ : ອ່າງເກັບນ້ຳ, ກຳແພງ, ຮົ້ວ, ປະຕູໂຂງ, ສວນສາທາລະນະ, ລະບົບຕາໜ່າງໄຟຟ້າ, ໂທລະຄົມມະນາຄົມ, ລະບົບຕາໜ່າງນ້ຳປະປາ, ລະບົບລະບາຍນ້ຳສາທາລະນະ ແລະ ສິ່ງກໍ່ສ້າງອື່ນໆ;

7. ການອະນຸຍາດປຸກສ້າງ ໝາຍເຖິງ ການອອກໃບອະນຸຍາດ ໃຫ້ຜູ້ຂໍອະນຸຍາດປຸກສ້າງ ໂດຍອົງການຄຸ້ມຄອງການປຸກສ້າງ ພາຍຫລັງ ທີ່ໄດ້ຄົ້ນຄ້ວາ, ພິຈາລະນາແລ້ວເຫັນວ່າຖືກຕ້ອງ ແລະ ສອດຄ່ອງກັບຜັງເມືອງ ແລະ ລະບຽບການທີ່ກ່ຽວຂ້ອງ;
8. ການຢັ້ງຢືນຄວາມຖືກຕ້ອງຂອງສິ່ງປຸກສ້າງ ໝາຍເຖິງ ການອອກໃບຢັ້ງຢືນຄວາມຖືກຕ້ອງ ໂດຍອົງການຄຸ້ມຄອງການປຸກສ້າງຕໍ່ສິ່ງປຸກສ້າງທີ່ສຳເລັດແລ້ວພາຍຫລັງທີ່ໄດ້ກວດກາ ແລະ ເຫັນວ່າຖືກຕ້ອງຕາມການອະນຸມັດ.

## ໝວດທີ່ II
## ການອະນຸຍາດປຸກສ້າງ

### ມາດຕາ 4 : ຜູ້ອະນຸມັດການປຸກສ້າງ ແລະ ຢັ້ງຢືນຄວາມຖືກຕ້ອງຂອງການປຸກສ້າງ

ຜູ້ອະນຸມັດການປຸກສ້າງ ແລະ ຢັ້ງຢືນຄວາມຖືກຕ້ອງຂອງການປຸກສ້າງ ປະກອບດ້ວຍຂັ້ນຕ່າງໆ ດັ່ງນີ້ :

1. ຂັ້ນແຂວງ : ຫົວໜ້າພະແນກ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນຜູ້ເຊັນອະນຸມັດການປຸກສ້າງ ແລະ ການຢັ້ງຢືນຄວາມຖືກຕ້ອງ ຂອງການປຸກສ້າງລະດັບ2;
2. ຂັ້ນເມືອງ : ເຈົ້າເມືອງ ຫລື ຫົວໜ້າເທດສະບານ ເປັນຜູ້ເຊັນອະນຸມັດການປຸກສ້າງ ແລະ ການຢັ້ງຢືນຄວາມຖືກຕ້ອງ ຂອງການປຸກສ້າງລະດັບ1.

### ມາດຕາ 5 : ການປະກອບເອກະສານຂໍອະນຸຍາດປຸກສ້າງ

ບຸກຄົນ ຫລື ການຈັດຕັ້ງໃດ ທີ່ມີຈຸດປະສົງປຸກສ້າງອາຄານ ຫລື ສິ່ງປຸກສ້າງຕ່າງໆ ຕ້ອງໄດ້ຍື່ນຄຳຮ້ອງຂໍອະນຸຍາດປຸກສ້າງ ເຖິງອົງການຄູ້ມຄອງການປຸກສ້າງຂັ້ນເມືອງທີ່ກ່ຽວຂ້ອງຊຶ່ງປະກອບດ້ວຍເອກະສານ ດັ່ງລຸ່ມນີ້ :

1. ໃບສະເໜີ ຂໍອະນຸຍາດປຸກສ້າງ ອອກຊື່ ເຈົ້າຂອງກິດຈະການປຸກສ້າງ;
2. ໃບຢັ້ງຢືນທີ່ຢູ່ ຂອງຜູ້ຂໍອະນຸຍາດປຸກສ້າງ;
3. ສຳເນົາເອກະສານຢັ້ງຢືນ ກ່ຽວກັບ ການໄດ້ຮັບສິດໃນການນຳໃຊ້ທີ່ດິນທີ່ຖືກຕ້ອງຕາມກົດໝາຍຂອງຜູ້ຂໍອະນຸຍາດປຸກສ້າງ;
4. ແຜນຜັງທີ່ຕັ້ງ ແລະ ຮູບຖ່າຍຂອງສະຖານທີ່ຈະປຸກສ້າງ;
5. ແຜນຜັງລວມ ( ແຕ້ມລະບົບລະບາຍນ້ຳເປື້ອນ, ນ້ຳຝົນ ແລະ ສິ່ງກໍ່ສ້າງທີ່ມີຢູ່ອ້ອມຂ້າງອາຄານຈະປຸກໃໝ່ ຫລື ຖ້າເປັນການສ້ອມແປງມີການຕໍ່ເຕີມອາຄານ ຕ້ອງແຕ້ມອາຄານຫລັງທີ່ຈະຕໍ່

ເຕີມໃສ່ນ້ຳ ), ແຜນຜັງສະຖາປັດຕະຍະກຳ ແລະ ເຕັກນິກ ຊຶ່ງອອກແບບໂດຍບໍລິສັດສຳຫລວດອອກແບບເຄຫາສະຖານທີ່ຖືກຕ້ອງຕາມກົດໝາຍ;

6. ສັນຍາຜູກພັນກັບຜູ້ຢູ່ຂ້າງຄຽງ ລະຫວ່າງ ຜູ້ຂໍອະນຸຍາດປຸກສ້າງ ກັບ ເຈົ້າຂອງ ຫລື ຜູ້ນຳໃຊ້ທີ່ດິນ ແລະ ອາຄານຂ້າງຄຽງ ຫລື ຜູ້ຕາງໜ້າທີ່ໄດ້ຮັບມອບສິດນຳໃຊ້ ແລະ ຄຸ້ມຄອງ ທີ່ດິນ ຫລື ອາຄານນັ້ນຢ່າງຖືກຕ້ອງຕາມກົດໝາຍ;
7. ສຳລັບເຂດອະນຸລັກຕົວເມືອງ ການປະກອບເອກະສານຂໍອະນຸຍາດປຸກສ້າງຕ້ອງປະຕິບັດຕາມລະບຽບສະເພາະທີ່ກຳນົດໄວ້.

**ມາດຕາ 6 : ໃບອະນຸຍາດປຸກສ້າງ**

- ໃບອະນຸຍາດປຸກສ້າງ ແມ່ນເອກະສານຢັ້ງຢືນການໄດ້ຮັບການອະນຸຍາດປຸກສ້າງຢ່າງຖືກຕ້ອງ ມີຜົນໃຊ້ໄດ້ພາຍໃນກຳນົດເວລາ 3 ເດືອນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ກໍລະນີທີ່ ໄດ້ລົງມືປຸກສ້າງພາຍໃນກຳນົດເວລາດັ່ງກ່າວ, ໃບອະນຸຍາດຈະມີຄຸນຄ່າ ແລະ ສາມາດໃຊ້ເປັນຫລັກຖານ ຈົນກ່ວາການປຸກສ້າງສຳເລັດຕາມແຜນການ. ກໍລະນີທີ່ ບໍ່ໄດ້ລົງມືປຸກສ້າງຕາມກຳນົດເວລາດັ່ງກ່າວ ຜູ້ຂໍອະນຸຍາດຕ້ອງໄດ້ຂໍຕໍ່ອາຍຸການນຳໃຊ້ຕື່ມອີກ ແຕ່ບໍ່ໃຫ້ເກີນ 2 ຄັ້ງ, ຖ້າເກີນກຳນົດນີ້ໃບອະນຸຍາດທີ່ອອກໃຫ້ແລ້ວນັ້ນຈະໝົດຄຸນຄ່າທັນທີ.

**ມາດຕາ 7 : ປະເພດຂອງການອະນຸຍາດປຸກສ້າງ**

ການອະນຸຍາດປຸກສ້າງ ແບ່ງເປັນ 4 ປະເພດ ດັ່ງນີ້ :

1. ການປຸກສ້າງ ປະກອບດ້ວຍ ການກໍ່ສ້າງ ອາຄານໃໝ່, ສິ່ງກໍ່ສ້າງທີ່ຕິດພັນກັບອາຄານ ແລະ ສິ່ງກໍ່ສ້າງທີ່ຮັບໃຊ້ສາທາລະນະປະໂຫຍດຕ່າງໆ ຕາມການກຳນົດໃນມາດຕາ3 ຂອງຂໍ້ຕົກລົງສະບັບນີ້;
2. ການສ້ອມແປງໃຫຍ່ ປະກອບດ້ວຍ ການສ້ອມແປງໃຫຍ່, ການດັດແປງໂຄງສ້າງ, ການປ່ຽນແປງຮູບຊົງພາຍນອກ, ການຕໍ່ເຕີມ, ການທັບມ້າງ, ການຮື້ຖອນ, ການເຄື່ອນຍ້າຍ ແລະ ການປ່ຽນແປງການນຳໃຊ້ບັນດາສິ່ງປຸກສ້າງຕ່າງໆ;
3. ການຂຸດດິນ ຫລື ຖົມດິນ ປະກອບດ້ວຍ ການຂຸດ ຫລື ຖົມດິນເພື່ອການປຸກສ້າງ ແລະ ກິດຈະການອື່ນໆ;
4. ການຕິດຕັ້ງ ປະກອບດ້ວຍ ການຕິດຕັ້ງເສົາໄຟຟ້າ, ເສົາໂທລະສັບ, ເສົາອາກາດ, ປ້າຍໂຄສະນາ ແລະ ອື່ນໆ.

**ມາດຕາ 8 : ການຈັດລະດັບຂອງການປຸກສ້າງ**

ເພື່ອໃຫ້ການຄົ້ນຄ້ວາຄຳຮ້ອງຂໍອະນຸຍາດປຸກສ້າງປະຕິບັດໄດ້ໄວຂຶ້ນ, ຂໍ້ຕົກລົງສະບັບນີ້ໄດ້ແບ່ງການປຸກສ້າງອອກເປັນ 2 ລະດັບ ຄື :

- ລະດັບ 1: ປະກອບດ້ວຍ ການຂຸດດິນ ຫລື ຖົມດິນ, ການສ້ອມແປງ, ການຕິດຕັ້ງ ແລະ ການກໍ່ສ້າງບັນດາອາຄານ ຫລື ສິ່ງປຸກສ້າງໃໝ່ຂະໜາດນ້ອຍ ທີ່ມີຜົນກະທົບຕ່ຳຕໍ່ສິ່ງແວດລ້ອມ ແລະ ຜູ້ຢູ່ອາໃສອ້ອມຂ້າງ;

- ລະດັບ 2 : ປະກອບດ້ວຍ ການຂຸດດິນ ຫລື ຖົມດິນ, ການຕິດຕັ້ງ ແລະ ການກໍ່ສ້າງບັນດາອາຄານ ຫລື ສິ່ງປຸກສ້າງຂະໜາດໃຫຍ່ ທີ່ມີຜົນກະທົບປານກາງທາສູງຕໍ່ສິ່ງແວດລ້ອມ ຫລື ຜູ້ຢູ່ອາໃສອ້ອມຂ້າງ.

ລາຍລະອຽດໃນການແບ່ງລະດັບ ຂອງການປຸກສ້າງໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 2.

**ມາດຕາ 9 : ຂັ້ນຕອນການຄົ້ນຄ້ວາ ແລະ ການອະນຸຍາດປຸກສ້າງ**

ພາຍຫລັງ ທີ່ອົງການຄຸ້ມຄອງການປຸກສ້າງຂັ້ນທີ່ກ່ຽວຂ້ອງໄດ້ຮັບເອກະສານ ຈາກຜູ້ຂໍອະນຸຍາດປຸກສ້າງແລ້ວ ຕ້ອງໄດ້ດຳເນີນການຄົ້ນຄ້ວາ ແລະ ອະນຸມັດ ຕາມຂັ້ນຕອນດັ່ງນີ້ :

1. ຮັບຄຳຮ້ອງ ແລະ ອອກໜັງສືຢັ້ງຢືນການຮັບເອກະສານໃຫ້ຜູ້ຂໍອະນຸຍາດປຸກສ້າງ ເມື່ອເຫັນວ່າເອກະສານທີ່ປະກອບມາ ຄົບຖ້ວນ ຕາມລາຍການທີ່ໄດ້ລະບຸໄວ້ໃນມາດຕາ 05 ຂອງຂໍ້ຕົກລົງສະບັບນີ້;
2. ຈັດລະດັບຂອງການປຸກສ້າງ ຕາມມາດຕາ 08 ແລ້ວຄົ້ນຄ້ວາພິຈາລະນາອະນຸມັດການປຸກສ້າງຕາມແຕ່ລະ ລະດັບ ດັ່ງລຸ່ມນີ້ :
   - ລະດັບ 1 ອົງການຄຸ້ມຄອງການປຸກສ້າງຂັ້ນເມືອງ ເປັນຜູ້ຄົ້ນຄ້ວາພິຈາລະນາອະນຸມັດ;
   - ລະດັບ 2 ນຳສົ່ງໃຫ້ອົງການ ຄຸ້ມຄອງການປຸກສ້າງຂັ້ນແຂວງ ເປັນຜູ້ຄົ້ນຄ້ວາພິຈາລະນາອະນຸມັດ.
3. ລົງກວດກາສະຖານທີ່ ທີ່ຈະປຸກສ້າງ ແລະ ຄົ້ນຄ້ວາພິຈາລະນາຄວາມຖືກຕ້ອງ ຂອງຄຳຮ້ອງຂໍອະນຸຍາດປຸກສ້າງ ໂດຍອີງຕາມແຜນຜັງເມືອງ ແລະ ລະບຽບການ ທີ່ກ່ຽວຂ້ອງ ດັ່ງລຸ່ມນີ້ :
   - ແຜນຜັງຊີ້ນຳລວມ ທີ່ໄດ້ຖືກຮັບຮອງຢ່າງເປັນທາງການ;
   - ແຜນຜັງແບ່ງເຂດ ແລະ ລະບຽບການນຳໃຊ້ທີ່ດິນສະເພາະ;
   - ລະບຽບການ, ຂໍ້ກຳນົດ ຫລື ແຈ້ງການ ກ່ຽວກັບການຄຸ້ມຄອງຕົວເມືອງ ແລະ ການປຸກສ້າງ, ການອະນຸລັກສະຖາປັດຕະຍະກຳ, ບູຮານສະຖານ, ສິ່ງແວດລ້ອມ ແລະ ອື່ນໆ ທີ່ກ່ຽວຂ້ອງ.

   ໃນກໍລະນີ ການອອກແບບບໍ່ຖືກຕ້ອງຕາມແຜນຜັງເມືອງ ແລະ ລະບຽບການທີ່ກ່ຽວຂ້ອງຂ້າງເທິງນັ້ນ ຫລື ມີເອກະສານໃດໜຶ່ງບໍ່ລະອຽດຊັດເຈນ ແລະ ບໍ່ໄດ້ຕາມມາດຕະຖານທາງວິຊາການ ອົງການຄຸ້ມຄອງການປຸກສ້າງຂັ້ນທີ່ກ່ຽວຂ້ອງຕ້ອງແຈ້ງໃຫ້ຜູ້ຂໍອະນຸຍາດປຸກສ້າງພາຍໃນ 07 ວັນ ເພື່ອຮັບຊາບ ແລະ ເຊັນຮັບເອົາຄຳຮ້ອງຂໍອະນຸຍາດປຸກສ້າງໄປປະກອບຄືນໃໝ່ໃຫ້ຖືກຕ້ອງ.
4. ເມື່ອພິຈາລະນາ ຄຳຮ້ອງຂໍອະນຸຍາດປຸກສ້າງ ເຫັນວ່າຖືກຕ້ອງ ກໍອອກໃບອະນຍາດປຸກສ້າງໃຫ້ພາຍໃນກຳນົດບໍ່ເກີນ 30 ວັນນັບແຕ່ມື້ຮັບເອກະສານຖືກຕ້ອງ.

**ມາດຕາ 10 : ການເກັບມ້ຽນ ແລະ ສຳເນົາເອກະສານປຸກສ້າງ**

ພາຍຫລັງທີ່ໄດ້ອອກ ໃບອະນຸຍາດ ແລະ ໃບຢັ້ງຢືນຄວາມຖືກຕ້ອງ ຂອງການປຸກສ້າງ, ການເກັບມ້ຽນ ແລະ ສຳເນົາເອກະສານປຸກສ້າງໃນແຕ່ລະ ລະດັບ ມີດັ່ງນີ້ :

- ລະດັບ 1: ອົງການຄຸ້ມຄອງການປຸກສ້າງຂັ້ນເມືອງ ຫລື ເທດສະບານ ອອກໃບອະນຸຍາດ ແລະ ໃບຢັ້ງຢືນຄວາມຖືກຕ້ອງ ຂອງການປຸກສ້າງ 2 ສະບັບ:
    - 1 ສະບັບ ມອບໃຫ້ຜູ້ຂໍອະນຸຍາດ;
    - 1ສະບັບ ເກັບມ້ຽນສຳເນົາ.
- ລະດັບ 2: ອົງການຄຸ້ມຄອງການປຸກສ້າງຂັ້ນແຂວງ, ນະຄອນຫລວງ ແລະ ເຂດພິເສດ ອອກໃບອະນຸຍາດ ແລະ ໃບຢັ້ງຢືນຄວາມຖືກຕ້ອງ ຂອງການປຸກສ້າງ 3 ສະບັບ:
    - 1 ສະບັບ ມອບໃຫ້ຜູ້ຂໍອະນຸຍາດ;
    - 1 ສະບັບ ມອບໃຫ້ອົງການຄຸ້ມຄອງການປຸກສ້າງ ປະຈຳເມືອງ ຫລື ເທດສະບານ ເພື່ອຕິດຕາມກວດກາ;
    - 1ສະບັບ ເກັບມ້ຽນສຳເນົາ.

## ໝວດທີ່ III
## ການກວດກາ ແລະ ການຢັ້ງຢືນຄວາມຖືກຕ້ອງຂອງການປຸກສ້າງ

### ມາດຕາ 11 : ການກວດກາການປຸກສ້າງ

ອົງການຄຸ້ມຄອງການປຸກສ້າງຂັ້ນເມືອງ ແລະ ຂັ້ນແຂວງ ຕ້ອງລົງຕິດຕາມກວດກາກິດຈະການ ການປຸກສ້າງຕ່າງໆທີ່ຕົນອະນຸມັດຢ່າງໜ້ອຍ 02 ຄັ້ງ ກ່ອນການປຸກສ້າງເຫລົ່ານັ້ນຈະສຳເລັດ ເພື່ອຄວບຄຸມການປຸກສ້າງໃຫ້ເປັນໄປຕາມການອະນຸມັດ.

ການກວດກາແຕ່ລະຄັ້ງຕ້ອງໄດ້ເຮັດບົດບັນທຶກຮ່ວມກັນກັບເຈົ້າຂອງກິດຈະການ ເພື່ອຮັກສາໄວ້ເປັນຫລັກຖານ. ຖ້າກວດກາເຫັນວ່າການປຸກສ້າງບໍ່ຖືກຕາມການອະນຸມັດ ແມ່ນໃຫ້ປະຕິບັດຕາມມາດຕະການຕ່າງໆ ດັ່ງທີ່ໄດ້ກຳນົດໄວ້ໃນໝວດທີ VI, ມາດຕາ21 ຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 12 : ການອອກໃບຢັ້ງຢືນຄວາມຖືກຕ້ອງ

- ຫລັງຈາກການປຸກສ້າງໄດ້ສຳເລັດແລ້ວ ຜູ້ໄດ້ຮັບອະນຸຍາດປຸກສ້າງຕ້ອງແຈ້ງເປັນລາຍລັກອັກສອນເຖິງອົງການຄຸ້ມຄອງການປຸກສ້າງເພື່ອຊາບ ພາຍໃນກຳນົດເວລາບໍ່ເກີນ 15 ວັນ, ອົງການຄຸ້ມຄອງການປຸກສ້າງຂັ້ນທີ່ກ່ຽວຂ້ອງ ຕ້ອງລົງກວດກາເທື່ອສຸດທ້າຍ ແລະ ອອກໃບຢັ້ງຢືນຄວາມຖືກຕ້ອງໃຫ້ເມື່ອເຫັນວ່າການປຸກສ້າງຖືກຕ້ອງຕາມການອະນຸຍາດ;
- ໃບຢັ້ງຢືນຄວາມຖືກຕ້ອງ ແມ່ນເອກະສານສຳຄັນທາງດ້ານກົດໝາຍ ແລະ ມີຄຸນຄ່າຈົນກ່ວາສິ່ງປຸກສ້າງດັ່ງກ່າວຈະມີການປ່ຽນແປງໃໝ່.

## ໝວດທີ IV
## ອົງການຄຸ້ມຄອງ ແລະ ກວດກາການປຸກສ້າງ

**ມາດຕາ 13 : ອົງການຄຸ້ມຄອງ ແລະ ກວດກາການປຸກສ້າງ**

ອົງການຄຸ້ມຄອງ ແລະ ກວດກາການປຸກສ້າງ ປະກອບດ້ວຍຂັ້ນຕ່າງໆ ດັ່ງນີ້ :

1. ຂັ້ນສູນກາງ : ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ;
2. ຂັ້ນແຂວງ : ພະແນກຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງປະຈຳແຂວງ;
3. ຂັ້ນເມືອງ : ຫ້ອງການຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ, ອົງການພັດທະນາ ແລະ ບໍລິຫານຕົວເມືອງ ທີ່ໄດ້ຮັບການມອບໝາຍ ;
4. ຂັ້ນບ້ານ : ອົງການປົກຄອງບ້ານ.

**ມາດຕາ 14 : ສິດ ແລະ ໜ້າທີ່ ຂອງ ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ**

ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ມີສິດ ແລະ ໜ້າທີ່ຕົ້ນຕໍ ໃນການຄຸ້ມຄອງການປຸກສ້າງ ດັ່ງນີ້ :

1. ອອກຂໍ້ກຳນົດ, ກົດລະບຽບ ກ່ຽວກັບ ການຄຸ້ມຄອງ ແລະ ກວດກາ ການປຸກສ້າງ ເພື່ອນຳໄປຈັດຕັ້ງປະຕິບັດຢ່າງເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ;
2. ຄົ້ນຄວ້າປະກອບຄຳເຫັນ ຕໍ່ໂຄງການລົງທຶນທີ່ກ່ຽວຂ້ອງກັບການປຸກສ້າງຂະໜາດໃຫຍ່ ຊຶ່ງແມ່ນ ລັດຖະບານເປັນຜູ້ອະນຸມັດ;
3. ເກັບກຳຂໍ້ມູນສະຖິຕິ, ກວດກາການປະຕິບັດລະບຽບຜັງເມືອງ ແລະ ການຄຸ້ມຄອງການປຸກສ້າງ ໃນຂອບເຂດທົ່ວປະເທດ;
4. ເຜີຍແຜ່ກົດໝາຍ, ຂໍ້ກຳນົດ, ກົດລະບຽບ, ລະບຽບການ ແລະ ອອກບົດແນະນຳ ກ່ຽວກັບ ຜັງເມືອງ ແລະ ການປຸກສ້າງພ້ອມທັງໃຫ້ຂໍ້ມູນ, ຂ່າວສານທີ່ເປັນປະໂຫຍດແກ່ປະຊາຊົນ ເພື່ອຮັບຮູ້ ແລະ ປະຕິບັດໃຫ້ຖືກຕ້ອງ;
5. ປະຕິບັດໜ້າທີ່ອື່ນໆ ກ່ຽວກັບການຄຸ້ມຄອງການປຸກສ້າງຕາມການມອບໝາຍຂອງ ຂັ້ນເທິງ.

**ມາດຕາ 15 : ສິດ ແລະ ໜ້າທີ່ ຂອງພະແນກຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ**

ພະແນກຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ມີສິດ ແລະ ໜ້າທີ່ຕົ້ນຕໍໃນການຄຸ້ມຄອງການປຸກສ້າງ ດັ່ງນີ້ :

1. ອອກໃບອະນຸຍາດປຸກສ້າງ ແລະ ໃບຢັ້ງຢືນຄວາມຖືກຕ້ອງ ສຳລັບການປຸກສ້າງລະດັບ 2 ຕາມຂໍ້ຕົກລົງສະບັບນີ້, ເຂົ້າຮ່ວມໃນຄະນະກຳມະການຂອງການປຸກສ້າງໂຄງການລົງທຶນໃຫຍ່ ທີ່ນອນໃນແຂວງ, ນະຄອນຫລວງ ແລະ ເຂດພິເສດ ທີ່ຕົນຮັບຜິດຊອບ ;
2. ພົວພັນ, ປະສານສົມທົບ ແລະ ຂໍຄຳຄິດຄຳເຫັນ ນຳພາກສ່ວນທີ່ກ່ຽວຂ້ອງ ເພື່ອປະຕິບັດໜ້າທີ່ຄຸ້ມຄອງການປຸກສ້າງ ໃຫ້ມີປະສິດທິພາບ;

3. ເກັບກຳຂໍ້ມູນສະຖິຕິ, ກວດກາການປະຕິບັດລະບຽບຜັງເມືອງ ແລະ ການຄຸ້ມຄອງການປຸກສ້າງ ໃນຂອບເຂດແຂວງ, ນະຄອນຫລວງ ແລະ ເຂດພິເສດ ຂອງຕົນ;
4. ເກັບຄ່າທຳນຽມ ການອອກໃບອະນຸຍາດປຸກສ້າງ ແລະ ໃບຢັ້ງຢືນຄວາມຖືກຕ້ອງ ລວມທັງຄ່າປັບໃໝຕ່າງໆ ຕາມລະບຽບກົດໝາຍ;
5. ໂຄສະນາ ເຜີຍແຜ່ກົດໝາຍ, ຂໍ້ກຳນົດ, ກົດລະບຽບ, ລະບຽບການ ກ່ຽວກັບຜັງເມືອງ ແລະ ການປຸກສ້າງ, ສ້າງຈິດສຳນຶກໃຫ້ຊຸມຊົນເຂົ້າຮ່ວມໃນວຽກງານຄຸ້ມຄອງການປຸກສ້າງ, ສະໜອງຂໍ້ມູນ, ຂ່າວສານ ທີ່ເປັນປະໂຫຍດແກ່ປະຊາຊົນ ເພື່ອຮັບຮູ້ ແລະ ປະຕິບັດໃຫ້ຖືກຕ້ອງ;
6. ປະຕິບັດໜ້າທີ່ອື່ນໆ ກ່ຽວກັບການຄຸ້ມຄອງການປຸກສ້າງ ຕາມການມອບໝາຍຂອງ ຂັ້ນເທິງ.

**ມາດຕາ 16 : ສິດ ແລະ ໜ້າທີ່ ຂອງ ຫ້ອງການຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງເມືອງ ແລະ ເທດສະບານ**

ຫ້ອງການ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເມືອງ ແລະ ເທດສະບານ ມີສິດ ແລະ ໜ້າທີ່ຕົ້ນຕໍໃນການຄຸ້ມຄອງການປຸກສ້າງ ດັ່ງນີ້ :

1. ຄົ້ນຄ້ວາ ການອອກໃບອະນຸຍາດປຸກສ້າງ ແລະ ໃບຢັ້ງຢືນຄວາມຖືກຕ້ອງ ສຳລັບການປຸກສ້າງລະດັບ1 ຕາມຂໍ້ຕົກລົງສະບັບນີ້;
2. ພົວພັນປະສານສົມທົບ ແລະ ຂໍຄຳຄິດຄຳເຫັນ ນຳພາກສ່ວນທີ່ກ່ຽວຂ້ອງ ເພື່ອປະຕິບັດໜ້າທີ່ຄຸ້ມຄອງການປຸກສ້າງ ໃຫ້ມີປະສິດທິຜົນ;
3. ເກັບຄ່າທຳນຽມ ການອອກໃບອະນຸຍາດປຸກສ້າງ ແລະ ໃບຢັ້ງຢືນຄວາມຖືກຕ້ອງ ໃນລະດັບທີ່ຕົນຮັບຜິດຊອບ ແລະ ຕາມລະບຽບກົດໝາຍ;
4. ສົມທົບກັບບ້ານ ລົງຕິດຕາມກວດກາຄວາມເປັນລະບຽບຮຽບຮ້ອຍ ຂອງການປຸກສ້າງ ຕາມຄວາມຮັບຜິດຊອບ ແລະ ປະຕິບັດມາດຕະການຕ່າງໆ ຕໍ່ຜູ້ລະເມີດ ຂໍ້ຕົກລົງສະບັບນີ້;
5. ເກັບກຳຂໍ້ມູນສະຖິຕິ, ກວດກາການປະຕິບັດລະບຽບຜັງເມືອງ, ການຄຸ້ມຄອງການປຸກສ້າງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ແລະ ລາຍງານ ການຈັດຕັ້ງປະຕິບັດ ການຄຸ້ມຄອງການປຸກສ້າງຂອງເມືອງ ຫລື ເທດສະບານ ໃຫ້ຂັ້ນເທິງຊາບທຸກໆ 6 ເດືອນ;
6. ໂຄສະນາ ເຜີຍແຜ່ກົດໝາຍ, ຂໍ້ກຳນົດ, ກົດລະບຽບ, ລະບຽບການ ກ່ຽວກັບຜັງເມືອງ ແລະ ການປຸກສ້າງ, ສ້າງຈິດສຳນຶກໃຫ້ຊຸມຊົນເຂົ້າຮ່ວມໃນວຽກງານຄຸ້ມຄອງການປຸກສ້າງ, ສະໜອງຂໍ້ມູນ, ຂ່າວສານ ທີ່ເປັນປະໂຫຍດແກ່ປະຊາຊົນ ເພື່ອຮັບຮູ້ ແລະ ປະຕິບັດໃຫ້ຖືກຕ້ອງ;
7. ປະຕິບັດໜ້າທີ່ອື່ນໆ ກ່ຽວກັບການຄຸ້ມຄອງການປຸກສ້າງ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 17 : ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

ອົງການປົກຄອງບ້ານມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງການປຸກສ້າງ ດັ່ງນີ້ :

1. ກວດກາສະຖານທີ່ປຸກສ້າງ ແລະ ຢັ້ງຢືນຄວາມຖືກຕ້ອງ ໃນການເຮັດສັນຍາຜູກພັນ ກັບຜູ້ຢູ່ຂ້າງຄຽງລະຫວ່າງ ຜູ້ຂໍອະນຸຍາດປຸກສ້າງ ກັບ ເຈົ້າຂອງ ຫລື ຜູ້ນຳໃຊ້ທີ່ດິນ ຫລື ອາຄານທີ່ຢູ່ຂ້າງຄຽງ;

2. ຕິດຕາມກວດກາຄວາມເປັນລະບຽບຮຽບຮ້ອຍ ຂອງການປຸກສ້າງ ແລະ ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການປຸກສ້າງ ໃນຂອບເຂດບ້ານຂອງຕົນ. ຖ້າພົບເຫັນການລະເມີດລະບຽບການຜັງເມືອງ ແລະ ການປຸກສ້າງ ຕ້ອງແຈ້ງໃຫ້ອົງການຄຸ້ມຄອງການປຸກສ້າງຂັ້ນເມືອງ ຫລື ເທດສະບານ ຮັບຊາບຢ່າງທັນການ;
3. ປະຕິບັດສິດ ແລະ ໜ້າທີ່ອື່ນໆທີ່ກ່ຽວຂ້ອງກັບການຄຸ້ມຄອງການປຸກສ້າງ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ V
## ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຜູ້ໄດ້ຮັບອະນຸຍາດການປຸກສ້າງ ແລະ ຂອງຜູ້ຮັບເໝົາກໍ່ສ້າງ

### ມາດຕາ 18 : ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ໄດ້ຮັບອະນຸຍາດການປຸກສ້າງ

ຜູ້ໄດ້ຮັບອະນຸຍາດປຸກສ້າງ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້ :

1. ຕ້ອງແຈ້ງມື້ທີ່ຈະລົງມືກໍ່ສ້າງຕົວຈິງ ໃຫ້ອົງການຄຸ້ມຄອງການປຸກສ້າງທີ່ອະນຸມັດຮັບຊາບ ແລະ ຕິດຕັ້ງປ້າຍບອກຂໍ້ມູນ ກ່ຽວກັບກິດຈະການປຸກສ້າງ ຢູ່ດ້ານໜ້າ ຫລື ບ່ອນທີ່ເຫັນໄດ້ງ່າຍ ໃນສະຖານທີ່ປຸກສ້າງເຊິ່ງລາຍລະອຽດ ກ່ຽວກັບຂະໜາດ ແລະ ເນື້ອໃນຂອງປ້າຍດັ່ງກ່າວໄດ້ກໍານົດໄວ້ໃນເອກະສານ ຊ້ອນທ້າຍ 7;
2. ຕ້ອງປຸກສ້າງໃຫ້ຖືກຕາມເອກະສານ ທີ່ໄດ້ຮັບອະນຸມັດ. ກໍລະນີທີ່ມີຄວາມຕ້ອງການປ່ຽນແປງຈາກແບບທີ່ໄດ້ຮັບອະນຸມັດແລ້ວ, ຕ້ອງໄດ້ຂໍອະນຸຍາດຕາມລະບຽບຫລັກການຄືນໃໝ່;
3. ໃນເວລາທໍາການປຸກສ້າງ ຕ້ອງສົມທົບກັບຜູ້ຮັບເໝົາປະຕິບັດຢ່າງເຂັ້ມງວດຕໍ່ກັບມາດຕະການໃນການຮັກສາຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ ແລະ ສະພາບແວດລ້ອມ ເພື່ອຫລີກເວັ້ນການສ້າງບັນຫາຜົນກະທົບອັນບໍ່ດີ ຕໍ່ຜູ້ຢູ່ອາໃສໃນບໍລິເວນໃກ້ຄຽງ ຫລື ຕໍ່ສາທາລະນະ;
4. ຕ້ອງໃຫ້ຄວາມຮ່ວມມື, ສະແດງໃບອະນຸຍາດ ພ້ອມທັງ ເອກະສານປຸກສ້າງຄົບຊຸດ ແລະ ປະຕິຕາມການແນະນໍາຂອງພະນັກງານອົງການຄຸ້ມຄອງການປຸກສ້າງ ທີ່ລົງກວດກາຢ່າງເຂັ້ມງວດ;
5. ຖ້າພົບເຫັນກໍລະນີທີ່ເຈົ້າໜ້າທີ່ຂອງອົງການຄຸ້ມຄອງການປຸກສ້າງ ປະຕິບັດໜ້າທີ່ບໍ່ຖືກຕ້ອງຊ່ວຍໃຊ້ຖານະຕໍາແໜ່ງເພື່ອຜົນປະໂຫຍດສ່ວນຕົວ ຫລື ໃຊ້ສິດເກີນຂອບເຂດ ຕ້ອງແຈ້ງຕໍ່ອົງການລັດທີ່ກ່ຽວຂ້ອງຮັບຊາບ ເພື່ອມີວິທີການແກ້ໄຂຢ່າງທັນການ;
6. ພາຍຫລັງທີ່ການປຸກສ້າງສໍາເລັດແລ້ວ ຕ້ອງແຈ້ງໃຫ້ອົງການຄຸ້ມຄອງການປຸກສ້າງຊາບ ເພື່ອລົງກວດກາ ແລະ ອອກໃບຢັ້ງຢືນຄວາມຖືກຕ້ອງໃຫ້.

**ມາດຕາ 19 : ໜ້າທີ່ ແລະ ຄວາມ ຮັບຜິດຊອບຂອງຜູ້ຮັບເໝົາກໍ່ສ້າງ**

ຜູ້ຮັບເໝົາກໍ່ສ້າງ ມີໜ້າທີ່ ແລະ ຮັບຜິດຊອບດັ່ງນີ້ :

1. ຈັດວາງພາຫະນະ, ເຄື່ອງມື, ອຸປະກອນ ແລະ ວັດສະດຸທີ່ຈະນໍາໃຊ້ໃນການກໍ່ສ້າງ ຫລື ສ້ອມແປງໄວ້ໃນສະຖານທີ່ ທີ່ເໝາະສົມບໍ່ກີດຂວາງການສັນຈອນ, ບໍ່ລົບກວນ, ບໍ່ສ້າງຄວາມເປື້ອນເປິະ ຫລື ສ້າງຄວາມເສຍຫາຍແກ່ບຸກຄົນ, ອາຄານ, ສະຖານທີ່ໃກ້ຄຽງ ລວມທັງບຸກຄົນ ຫລື ຍານພາຫະນະທີ່ສັນຈອນຜ່ານໄປມາ;
2. ເຮັດຮົ້ວກັ້ນບໍລິເວນກໍ່ສ້າງ ເພື່ອປ້ອງກັນອັນຕະລາຍໃນເວລາດໍາເນີນການກໍ່ສ້າງ ຫລື ສ້ອມແປງ, ປະຕິບັດຢ່າງເຂັ້ມງວດຕໍ່ກັບມາດຕະການຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ ແລະ ສິ່ງແວດລ້ອມ;
3. ຕ້ອງຈັດວາງຜັງສໍາລັບການປຸກສ້າງໃໝ່ ໃຫ້ຖືກກັບເສັ້ນແຖວທີ່ໄດ້ກໍານົດໄວ້ ໃນແຜນຜັງເມືອງ, ການປຸກສ້າງຕ້ອງປະຕິບັດໃຫ້ຖືກຕາມແບບທີ່ໄດ້ຮັບອະນຸຍາດ, ຮັບປະກັນມາດຕະຖານເຕັກນິກ ;
4. ພາຍຫລັງທີ່ສໍາເລັດການກໍ່ສ້າງ ຕ້ອງອະນາໄມສະຖານທີ່ກໍ່ສ້າງ ພ້ອມທັງ ຮື້ຖອນ, ເກັບມ້ຽນພາຫະນະ, ອຸປະກອນ, ເຄື່ອງມື, ສິ່ງປະກອບໃນການກໍ່ສ້າງ, ວັດຖຸເສດເຫລືອ ແລະ ອື່ນໆເພື່ອຄວາມເປັນລະບຽບຮຽບຮ້ອຍ.

## ໝວດທີ VI
## ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

**ມາດຕາ 20 : ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ຫລື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຄຸ້ມຄອງ ແລະ ປະຕິບັດຕາມລະບຽບການຜັງເມືອງ ແລະ ຂໍ້ກໍານົດຕ່າງໆກ່ຽວກັບການປຸກສ້າງ ຈະໄດ້ຮັບການຍ້ອງຍໍ ຫລື ໄດ້ຮັບນະໂຍບາຍອື່ນໆຕາມຄວາມເໝາະສົມ.

**ມາດຕາ 21 : ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫລື ການຈັດຕັ້ງທີ່ລະເມີດ ຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນສຶກສາອົບຮົມ, ໃຊ້ມາດຕະການຕ່າງໆ ແລ້ວແຕ່ກໍລະນີເບົາ ຫລື ໜັກ ດັ່ງນີ້ :

- **ມາດຕະການສຶກສາອົບຮົມ: .**

ບຸກຄົນ ຫລື ການຈັດຕັ້ງທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ ດັ່ງນີ້ :

1. ເຈົ້າຂອງສິ່ງປຸກສ້າງ ທີ່ທໍາການກໍ່ສ້າງໃນຂັ້ນເລີ່ມຕົ້ນໂດຍບໍ່ປະຕິບັດຕາມແບບ ທີ່ໄດ້ຮັບອະນຸຍາດຈະຖືກສຶກສາອົບຮົມ, ຕັກເຕືອນ ພ້ອມທັງໃຫ້ຢຸດເຊົາ ແລະ ແກ້ໄຂສິ່ງກໍ່ສ້າງທີ່ບໍ່ຖືກຕ້ອງນັ້ນເສຍກ່ອນ ຈຶ່ງຈະໄດ້ຮັບອະນຸຍາດໃຫ້ສືບຕໍ່ການກໍ່ສ້າງດັ່ງກ່າວ;

2. ຜູ້ຮັບເຫມົາກໍ່ສ້າງ ທີ່ຈັດວາງພາຫະນະ, ເຄື່ອງມື, ອຸປະກອນ ແລະ ວັດສະດຸກໍ່ສ້າງໄວ້ແບບຊະຊາຍ, ສ້າງຄວາມຫຍຸ້ງຍາກແກ່ການສັນຈອນ ຫລື ເຮັດໃຫ້ເກີດຄວາມເປື້ອນເປິະ ຈະຖືກສຶກສາອົບຮົມ ພ້ອມທັງໃຫ້ຈັດວາງຄືນໃໝ່ ພາຫະນະ, ເຄື່ອງມື, ອຸປະກອນ ແລະ ວັດສະດຸກໍ່ສ້າງ ໃຫ້ເປັນລະບຽບຮຽບຮ້ອຍ;
3. ເຈົ້າໜ້າທີ່ຄູ້ມຄອງການປຸກສ້າງ ທີ່ບໍ່ເອົາໃຈໃສ່ ຢ່າງເປັນປົກະຕິ ໃນການຕິດຕາມການກໍ່ສ້າງ, ບໍ່ເຮັດບົດບັນທຶກຢ່າງລະອຽດໃນເວລາລົງກວດກາວຽກງານຕ່າງໆ ແລະ ບໍ່ໄດ້ອຳນວຍຄວາມສະດວກ ຫລື ໃຫ້ການຮ່ວມມືເທົ່າທີ່ຄວນແກ່ຜູ້ມາຕິດຕໍ່ພົວພັນວຽກງານ ກ່ຽວກັບການປຸກສ້າງ ຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ອາດຈະຖືກປະຕິບັດວິໄນ ຕາມແຕ່ລະກໍລະນີ.

- **ມາດຕະການໃຊ້ແທນຄ່າເສຍຫາຍ :**

ເຈົ້າຂອງສິ່ງປຸກສ້າງ ຫລື ຜູ້ຮັບເຫມົາກໍ່ສ້າງທີ່ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍແກ່ຊັບສິນຂອງລັດ, ຂອງລວມຫມູ່ ຫລື ຂອງບຸກຄົນຕ້ອງໄດ້ໃຊ້ແທນຄ່າເສຍຫາຍ ຕາມມູນຄ່າເສຍຫາຍທີ່ຕົນກໍ່ຂຶ້ນ.

- **ມາດຕະການປັບໃໝ :**

ບຸກຄົນ ຫລື ການຈັດຕັ້ງທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການດັ່ງນີ້:

1. ເຈົ້າຂອງສິ່ງປຸກສ້າງ ທີ່ທຳການປຸກສ້າງໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ສິບສ່ວນຮ້ອຍຂອງມູນຄ່າສິ່ງກໍ່ສ້າງທີ່ໄດ້ເຮັດມາແລ້ວພ້ອມທັງໃຫ້ຢຸດເຊົາການກໍ່ສ້າງ .
   ໃນກໍລະນີສິ່ງກໍ່ສ້າງນັ້ນ ບໍ່ຖືກຕ້ອງຕາມແຜນຜັງເມືອງ ແລະ ລະບຽບການປຸກສ້າງກໍ່ຈະຕ້ອງໄດ້ແກ້ໄຂໃຫ້ຖືກຕ້ອງເສຍກ່ອນ ແລ້ວເຈົ້າຂອງສິ່ງປຸກສ້າງຈະຕ້ອງຍື່ນຄຳຮ້ອງຂໍອະນຸຍາດປຸກສ້າງໃໝ່ ຕາມມາດຕາ 05 ຂ້າງເທິງນີ້. ເມື່ອໄດ້ຮັບການອະນຸຍາດຈາກ ອົງການຄຸ້ມຄອງການປຸກສ້າງຂັ້ນທີ່ກ່ຽວຂ້ອງແລ້ວຈຶ່ງຈະສາມາດດຳເນີນການກໍ່ສ້າງໃໝ່, ເຈົ້າຂອງສິ່ງປຸກສ້າງ ທີ່ເຄີຍໄດ້ຖືກສຶກສາອົບຮົມມາແລ້ວ ຫາກຍັງສືບຕໍ່ລະເມີດກໍຈະຖືກປັບໃໝສິບສ່ວນຮ້ອຍ ຂອງມູນຄ່າໂຄງການກໍ່ສ້າງທັງໝົດ;
2. ຜູ້ຮັບເໝົາກໍ່ສ້າງທີ່ມີໃບອະນຸຍາດດຳເນີນທຸລະກິດກໍ່ສ້າງ ຊຶ່ງໄດ້ທຳການກໍ່ສ້າງໃຫ້ແກ່ເຈົ້າຂອງສິ່ງປຸກສ້າງ ທີ່ບໍ່ມີໃບອະນຸຍາດການປຸກສ້າງຈະ ຖືກປັບໃໝ ສິບສ່ວນຮ້ອຍ ຂອງສິ່ງກໍ່ສ້າງທີ່ໄດ້ເຮັດມາແລ້ວ ແລະ ອາດຖືກໂຈະກິດຈະການ ຫລື ຖືກຖອນໃບອະນຸຍາດດຳເນີນທຸລະກິດກໍ່ສ້າງ. ສຳລັບຜູ້ຮັບເໝົາກໍ່ສ້າງ ທີ່ບໍ່ມີໃບອະນຸຍາດດຳເນີນທຸລະກິດການກໍ່ສ້າງ ຫລື ນຳໃຊ້ໃບອະນຸຍາດຂອງຜູ້ອື່ນ ເພື່ອທຳການກໍ່ສ້າງ ຈະຖືກປັບໃໝ ຫ້າສ່ວນຮ້ອຍ ຂອງມູນຄ່າໂຄງການກໍ່ສ້າງທັງໝົດພ້ອມທັງໃຫ້ຢຸດເຊົາການກໍ່ສ້າງດັ່ງກ່າວ;
3. ເຈົ້າຂອງສິ່ງປຸກສ້າງ ຫລື ຜູ້ຮັບເໝົາ ທີ່ສ້າງຄວາມເປິະເປື້ອນ ແລະ ສ້າງສິ່ງກີດຂວາງການສັນຈອນ, ກໍ່ຄວາມເສຍຫາຍແກ່ເສັ້ນທາງ, ຮ່ອງລະບາຍນ້ຳຈະຖືກປັບໃໝຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ VII
## ຂໍ້ກຳນົດສຸດທ້າຍ

**ມາດຕາ 22 : ການຈັດຕັ້ງປະຕິບັດ**

- ສິ່ງປຸກສ້າງ ທີ່ມີກ່ອນການປະກາດໃຊ້ ຂໍ້ຕົກລົງສະບັບນີ້ ຈະຖືກຍົກເວັ້ນການຂໍອະນຸຍາດປຸກສ້າງ, ແຕ່ເຈົ້າຂອງສິ່ງກໍ່ສ້າງນັ້ນສາມາດມາສະເໜີຕໍ່ອົງການຄຸ້ມຄອງການປຸກສ້າງ ຂັ້ນທີ່ກ່ຽວຂ້ອງເພື່ອຂໍໃບຢັ້ງຢືນຄວາມຖືກຕ້ອງຂອງສິ່ງກໍ່ສ້າງດັ່ງກ່າວນັ້ນໄດ້;
- ມອບໃຫ້ກົມເຄຫາຜັງເມືອງ ອອກບົດແນະນຳລະອຽດ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດການຄຸ້ມຄອງການປຸກສ້າງ ໃຫ້ເປັນເອກະພາບ ຢູ່ໃນຂອບເຂດທົ່ວປະເທດ ພ້ອມທັງປະສານສົມທົບ ກັບບັນດາຂະແໜງການ ແລະ ບັນດາອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງໃນການລົງຕິດຕາມຊຸກຍູ້ກວດກາ ການຈັດຕັ້ງປະຕິບັດການຄຸ້ມຄອງການປຸກສ້າງ ໃຫ້ເຂົ້າສູ່ຄວາມເປັນລະບຽບຮຽບຮ້ອຍ ແລະ ມີປະສິດທິພາບ;
- ມອບໃຫ້ພະແນກ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງແຂວງ, ນະຄອນ ແລະ ເຂດພິເສດ ເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ ຮັບຜົນດີ ແລະ ເອົາໃຈໃສ່ກວດກາການເຄື່ອນໄຫວຂອງອົງການຄຸ້ມຄອງການປຸກສ້າງແຕ່ລະຂັ້ນຂອງຕົນຢ່າງເຂັ້ມງວດ.

**ມາດຕາ 23 : ຜົນບັງຄັບໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນລະບຽບການ ວ່າດ້ວຍການອະນຸຍາດປຸກສ້າງ ສະບັບເລກທີ1512/ຄຂປກ, ລົງວັນທີ 28 ກັນຍາ 1991. ຂໍ້ກຳນົດ, ກົດລະບຽບ ຫລື ແຈ້ງການອື່ນໆ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີ ວ່າການກະຊວງ ຄົມມະນາຄົມ
ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ